**ມິຊຊາອາທິດທີ 6 ກຳນົດທຳມະດາ ປີ A**

**ວັນທີ 16 ກຸມພາ 2020**



**ພຣະວໍລະສານໂດຍນັກບຸນມັດເທວ 5, 17-37**

ໃນເວລານັ້ນ, ພຣະເຢຊູເຈົ້າກ່າວກັບພວກສາວົກວ່າ: "ຖ້າພວກເຈົ້າບໍ່ເປັນຄົນຊອບທຳກວ່າພວກນັກກົດໝາຍແລະພວກຟາຣີເຊວແລ້ວ, ພວກເຈົ້າກໍຈະບໍ່ໄດ້ເຂົ້າໃນອານາຈັກສະຫວັນເລີຍ".

ພວກເຈົ້າໄດ້ຍິນຄວາມທີ່ກ່າວໄວ້ກັບຄົນໂບຮານວ່າ: "ຢ່າຂ້າຄົນ, ຖ້າຜູ້ໃດຂ້າຄົນ ຜູ້ນັ້ນກໍຈະຖືກຕັດສິນລົງໂທດ". ສ່ວນເຮົາ, ເຮົາບອກພວກເຈົ້າວ່າ: "ຜູ້ໃດຄຽດຊັງພີ່ນ້ອງຂອງຕົນເອງ ຜູ້ນັ້ນກໍຈະຖືກຕັດສິນ".

ພວກເຈົ້າໄດ້ຍິນຄວາມທີ່ກ່າວໄວ້ກັບຄົນໂບຮານວ່າ: "ຢ່າລ່ວງປະເວນີກັບເມຍຜູ້ອື່ນ". ສ່ວນເຮົາ, ເຮົາບອກພວກເຈົ້າວ່າ: "ຊາຍໃດຕັ້ງໃຈເບິ່ງຜູ້ຍິງດ້ວຍຄວາມປາດຖະໜາຊົ່ວ ເຂົາກໍໄດ້ລ່ວງປະເວນີໃນໃຈກັບຍິງນັ້ນແລ້ວ".

ພວກເຈົ້າຍັງໄດ້ຍິນຄຳທີ່ກ່າວໄວ້ກັບຄົນໂບຮານວ່າ: "ຢ່າສາບານບໍ່ຈິງ ແຕ່ຈົ່ງຖືຕາມຄຳປະຕິຍານທີ່ທຳໄວ້ກັບພຣະອົງເຈົ້າ". ສ່ວນເຮົາ, ເຮົາບອກພວກເຈົ້າວ່າ: "ຢ່າສາບານເລີຍ".

ເມື່ອເຈົ້າເວົ້າວ່າ "ແມ່ນ" ກໍໃຫ້ແມ່ນອີຫລີ. ຖ້າເຈົ້າເວົ້າວ່າ "ບໍ່ແມ່ນ" ກໍໃຫ້ບໍ່ແມ່ນອີຫລີ. ຖ້າເວົ້າລື່ນນັ້ນກໍແມ່ນມາຈາກພະຍາມານ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 5, 17-37**

ວັນອາທິດທີສີ່ທີ່ຜ່ານມາ, ນັກບຸນມັດເທວໄດ້ເລົ່າໃຫ້ພວກເຮົາຟັງເຖິງຕອນຕົ້ນຂອງຄຳເທດສອນຂອງພຣະເຢຊູເຈົ້າບົນພູເຂົາ ກ່ຽວກັບບຸນມະຫາລາບແປດປະການ ຫລືຄວາມສຸກແປດປະການນັ້ນເອງ. ຄຳເທດສອນຂອງພຣະເຢຊູເຈົ້ານີ້ບໍ່ໄດ້ເຈາະຈົງແຕ່ກຸ່ມຄົນໃດໜຶ່ງເທົ່ານັ້ນ, ແຕ່ສຳລັບໝົດທຸກຄົນບໍ່ວ່າພວກສາວົກກໍຄືຝູງຊົນ. ເພາະທຸກຄົນລ້ວນແຕ່ຖືກຮຽກເອີ້ນໃຫ້ພົບກັບຄວາມສຸກແລະເປັນຜູ້ດີບໍລິບູນ.

ການທີ່ພຣະເຢຊູເຈົ້າຊົງປະທັບນັ່ງບົນພູເຂົາແລະເທດສອນນັ້ນ ທຳໃຫ້ພວກເຮົາຄິດເຖິງໂມແຊໃນໜັງສືອົບພະຍົບ. ເມື່ອພຣະເຈົ້າປົດປ່ອຍປະຊາກອນອິສຣາແອນອອກຈາກການເປັນທາດຂອງປະເທດເອຢິບນັ້ນ, ພວກເຂົາໄດ້ເດີນທາງໃນທະເລຊາຍຈົນມາເຖິງບ່ອນທີ່ມີຊື່ວ່າ "ຊີນາຍ". ພຣະເຈົ້າໄດ້ຮຽກໂມແຊຂຶ້ນໄປເທິງພູເພື່ອກ່າວກັບທ່ານວ່າ ໃຫ້ເຈົ້າບອກກັບເຊື້ອສາຍຂອງຢາກ໊ອບແລະຊົນຊາດອິສຣາແອນວ່າ ແມ່ນເຮົາໄດ້ນຳເອົາພວກເຈົ້າອອກຈາກປະເທດເອຢິບແລະໄດ້ນຳພວກເຈົ້າມາຫາເຮົາດັ່ງນົກອິນຊີທີ່ໃຊ້ປີກຍົກລູກຂອງຕົນຂຶ້ນ. ບັດນີ້ຖ້າພວກເຈົ້າເຊື່ອຟັງແລະຮັກສາຄຳໝັ້ນສັນຍາຂອງເຮົາ ພວກເຈົ້າກໍເປັນປະຊາກອນເລືອກສັນຂອງເຮົາ. ຈາກນັ້ນ, ໂມແຊກໍໄດ້ເອີ້ນບັນດາຫົວໜ້າຊົນຊາດອິສຣາແອນມາປະຊຸມແລະບອກສິ່ງທີ່ພຣະເປັນເຈົ້າໄດ້ສັ່ງນັ້ນສູ່ພວກເຂົາຟັງ (ອພຍ 19, 1-7).

ສ່ວນພຣະເຢຊູເຈົ້າໃນພຣະວໍລະສານໂດຍນັກບຸນມັດເທວ, ພຣະອົງປຽບເໝືອນໂມແຊຄົນໃໝ່ທີ່ສັ່ງສອນປະຊາກອນຂອງພຣະເຈົ້າບົນພູເຂົາ. ຄຳຖາມທີ່ຕາມມາກໍຄືໂມແຊຄົນໃໝ່ມີຄວາມຄ້າຍຄືແລະແຕກຕ່າງຫຍັງກັບໂມແຊຄົນເກົ່າ? ໂມແຊຄົນເກົ່າເປັນຄົນກາງລະຫວ່າງພຣະເຈົ້າກັບປະຊາກອນຂອງພຣະອົງ. ສ່ວນພຣະເຢຊູເຈົ້າຜູ້ເປັນໂມແຊຄົນໃໝ່ ກໍເປັນຄົນກາງລະຫວ່າງພວກເຮົາກັບພຣະບິດາເຈົ້າ. ໂມແຊຄົນເກົ່າຕ້ອງຂຶ້ນໄປບົນພູເຂົາເພື່ອນຳເອົາວາຈາພຣະເຈົ້າໄປບອກໃຫ້ຊົນຊາດອິສາແອນຮູ້. ສ່ວນໂມແຊຄົນໃໝ່, ພຣະອົງເອງເປັນວາຈາພຣະເຈົ້າ. ເພາະພຣະອົງຄືພຣະວາຈານາດທີ່ຮັບເອົາກາຍເປັນມະນຸດ. ດັ່ງນັ້ນຄຳສອນຂອງພຣະເຢຊູເຈົ້າຈຶ່ງມີອຳນາດແລະແຕກຕ່າງໄປຈາກຄຳສອນຂອງຄົນອື່ນ. ແລະເປັນຕົ້ນຄຳສອນຂອງພຣະເຢຊູເຈົ້າທຳໃຫ້ພຣະທຳບັນຍັດແລະຄຳທຳນາຍຂອງບັນດາປະພາສົກໃນພຣະທຳເກົ່າສົມບູນຂຶ້ນໃນຕົວຂອງພຣະອົງ.

ດັ່ງວາຈາພຣະເຈົ້າໃນວັນອາທິດນີ້ທີ່ພຣະອົງໄດ້ກ່າວກັບພວກສາວົກວ່າ: *"ພວກເຈົ້າໄດ້ຍິນຄວາມທີ່ກ່າວໄວ້ກັບຄົນໂບຮານວ່າ..."*. ສ່ວນເຮົາ *"ເຮົາບອກພວກເຈົ້າວ່າ.."*. ຄຳເວົ້ານີ້ຂອງພຣະເຢຊູເຈົ້າບໍ່ໝາຍວ່າພຣະອົງມາເພື່ອປ່ຽນແປງຫລືລຶບລ້າງພຣະທຳບັນຍັດ, ແຕ່ພຣະອົງມາເພື່ອທຳໃຫ້ພຣະທຳບັນຍັດນັ້ນເລິກເຊິ່ງແລະສົມບູນຂຶ້ນ. ເພາະສະນັ້ນໃນຕອນທ້າຍຂອງຄຳສອນບົນພູເຂົາຂອງພຣະເຢຊູເຈົ້າ, ພຣະອົງຈຶ່ງກ່າວວ່າ: *"ຈົ່ງເປັນຜູ້ດີບໍລິບູນເໝືອນພຣະບິດາຂອງພວກເຈົ້າຜູ້ສະຖິດຢູ່ສະຫວັນຊົງເປັນຜູ້ດີບໍລິບູນນັ້ນແລ"* (ມທ 5, 48). ໝາຍວ່າເປົ້າໝາຍຂອງຄຳເທດສອນຂອງພຣະເຢຊູເຈົ້າບໍ່ພຽງແຕ່ທຳໃຫ້ພວກເຮົາພົບກັບຄວາມສຸກແທ້ຈິງໃນຊີວິດນີ້, ແຕ່ຍັງຊ່ວຍພວກເຮົາໃຫ້ຄ້າຍຄືກັບພຣະບິດາເຈົ້າຍິ່ງຂຶ້ນຄືເປັນຜູ້ດີບໍລິບູນນັ້ນແລ.

ຂໍໃຫ້ວາຈາພຣະເຈົ້າຊຶ່ງພວກເຮົາໄດ້ຟັງແຕ່ລະວັນແລະແຕ່ລະອາທິດນັ້ນຊ່ວຍພວກເຮົາໃຫ້ພົບກັບຄວາມສຸກແທ້ຈິງຄືການເປັນຜູ້ດີບໍລິບູນເໝືອນກັບພຣະບິດາຂອງພວກເຮົາຜູ້ສະຖິດຢູ່ສະຫວັນນັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ